# ຕາຕະລາງການໃຫ້ບໍລິການຊໍາລະສະສາງ

## 1. ການນໍາໃຊ້

**1.1** ເອກະສານສະບັບນີ້ປະກອບເປັນຕາຕະລາງການໃຫ້ບໍລິການຊໍາລະສະສາງຕາມທີ່ໄດ້ກ່າວເຖິງໃນເງື່ອນໄຂການທະນາຄານທົ່ວໄປຂອງ ANZ. ບົດບັນຍັດໃນຕາຕະລາງການໃຫ້ບໍລິການສະບັບນີ້ມີຜົນໃນກໍລະທີ່ທະນາຄານໄດ້ສະໜອງການບໍລິການທີ່ເໝາະສົມໃຫ້ແກ່ລູກຄ້າ.

**1.2** ຕາຕະລາງການໃຫ້ບໍລິການຊໍາລະສະສາງສະບັບນີ້ເປັນສ່ວນເພີ່ມເຕີ່ມໃຫ້ກັບເງື່ອນໄຂການທະນາຄານທົ່ວໄປຂອງ ANZ. ຄໍາສັບທີ່ພິມເປັນໂຕໃຫຍ່ທີ່ຖືກນໍາໃຊ້ໃນຕາຕະລາງການໃຫ້ບໍລິການຊໍາລະສະສາງແມ່ນມີຄໍານິຍາມສະເພາະໃນຕາຕະລາງຄໍານິຍາມທີ່ເປັນສ່ວນເພີ່ມເຕີ່ມໃຫ້ກັບເງື່ອນໄຂການທະນາຄານທົ່ວໄປຂອງ ANZ.

## 2. ການບໍລິການສົ່ງເງິນສົດ

ຕາມການຕິດພັນກັບບົດບັນຍັດກ່ຽວກັບການບໍລິການສົ່ງເງິນສົດ:

**2.1** ເງິນສົດຈະຖືກນໍາສົ່ງໂດຍທະນາຄານແຕ່ອີງຕາມຄວາມພ້ອມຂອງສະກຸນເງິນທີ່ກ່ຽວຂ້ອງ;

**2.2** ລູກຄ້າເຫັນທີ່ປຽບທຽບເງິນສົດທີ່ສົ່ງໂດຍທະນາຄານ ຫຼື ຜູ້ຮັບຜິດຊອບ ກັບຍອດທີ່ຖືກຕັດໃນບັນຊີ ແລະ ແຈ້ງໃຫ້ທະນາຄານຮັບຮູ້ເປັນລາຍລັກອັກສອນເຖິງສ່ວນຕ່າງພາຍໃນ 12:00 ທ່ຽງ ຂອງຂົງເຂດປະເທດທີ່ກ່ຽວຂ້ອງໃນວັນທໍາການຖັດໄປ ຫຼັງຈາກວັນທີທີ່ເງິນສົດຖືກນໍາສົ່ງໄປເຖິງສະຖານທີ່ ທີ່ຕ້ອງນໍາສົ່ງ. ຖ້າຫາກບໍ່ມີການແຈ້ງໃຫ້ຊາບດັ່ງກ່າວ, ຍອດເງິນທີ່ຕັດຈາກບັນຊີແມ່ນຈະຖືວ່າຖືກຕ້ອງ ແລະ ຮັບເອົາໂດຍລູກຄ້າ; ແລະ

**2.3** ລູກຄ້າຕ້ອງໄດ້ແຈ້ງໃຫ້ທະນາຄານຮູ້ຢ່າງທັນທ່ວງທີຖ້າຫາກວ່າ ເງິນສົດທີ່ຕ້ອງນໍາສົ່ງໄປຍັງສະຖານທີ່ທີ່ຕ້ອງສົ່ງບໍ່ໄດ້ຮັບໃນສະຖານທີ່ທີ່ຕ້ອງສົ່ງເຕັມຈໍານວນ. ຖ້າຫາກລູກຄ້າບໍ່ສາມາດປະຕິບັດການແຈ້ງດັ່ງກ່າວໄດ້ພາຍໃນ 1 ວັນທໍາການ ຂອງວັນທີ ທີ່ເງິນຄວນຈະໄປຮອດ, ທະນາຄານຈະຖືວ່າຍອດເງິນເຕັມຈໍານວນໄດ້ຖືກນໍາສົ່ງແລ້ວ ແລະ ລູກຄ້າບໍ່ສາມາດຮຽກຮ້ອງໃດໆຕໍ່ຝ່າຍກົງກັນຂ້າມ.

## 3. ບໍລິການແຊັກພາຍນອກ

ທີ່ຕິດພັນກັບການບໍລິການແຊັກພາຍນອກນີ້:

**3.1** ລູກຄ້າອະນຸມັດໃຫ້ທະນາຄານເຊັນໃນແຊັກວິສາຫະກິດ ໂດຍການປະທັບ ຫຼື ພິມລາຍເຊັນຂອງຜູ້ມີສິດອໍານາດເຕັມໃນບັນຊີທີ່ກໍານົດຕາມທີ່ແນະນໍາໃນບົດແນະນໍາທີ່ກ່ຽວພັນ. ທະນາຄານຈະ, ສໍາລັບທຸກການອອກແຊັກວິສາຫະກິດ, ນໍາໃຊ້ແບບຢ່າງລາຍເຊັນຂອງຜູ້ມີສິດອໍານາດເຕັມທີ່ສະໜອງໂດຍລຸກຄ້າ ໃຫ້ກັບທະນາຄານ;

**3.2** ທະນາຄານຈະຈັດສັນການຈັດສົ່ງເອກະສານຕ່າງໆຕາມການສະເໜີທີ່ກ່ຽວຂ້ອງ. ຖ້າຫາກວ່າລູກຄ້າບໍ່ໄດ້ສະເໜີໃຫ້ທະນາຄານນໍາສົ່ງເອກະສານທີ່ກ່ຽວຂ້ອງ, ລູກຄ້າສາມາດນັດວັນເວລາເພື່ອມາຮັບເອົາເອກະສານທີ່ກ່ຽວຂ້ອງຕ່າງໆດ້ວຍຕົນເອງ ພາຍໃນໄລຍະເວລາທີ່ທະນາຄານໄດ້ແຈ້ງໃຫ້ຊາບ ຫຼື ຕາມການເຫັນດີຂອງລູກຄ້າ;

**3.3** ລູກຄ້າເຫັນດີວ່າຈະບໍ່ດັດແປງຫຼືປັບປຸງແຊັກວິສາຫະກິດດ້ວຍຕົນເອງ. ຖ້າຫາກວ່າມີການດັດແປງ ຫຼື ປັບປຸງໃດໆເກີດຂຶ້ນ, ທະນາຄານ ຫຼື ຜູ້ຮັບຜິດຊອບຈະນໍາໃຊ້ດຸນພິນິດວ່າຈະນໍາໃຊ້ການດັດແກ້ດັ່ງກ່າວ; ແລະ

**3.4** ລູກຄ້ານໍາສະເໜີຕໍ່ທະນາຄານວ່າທຸກ ຂໍ້ຄວາມ, ລວດລາຍ, ຮູບ, ການອອກແບບ, ເຄື່ອງໝາຍການຄ້າ ຫຼື ຜົນງານສິນລະປະອື່ນໆ ທີ່ຕົກແຕ່ງໃຫ້ທະນາຄານ ລວມທັງການພິມຕາສານຕ່າງໆແມ່ນເປັນຂອງລູກຄ້າ, ຫຼື ລູກຄ້າໄດ້ຮັບອະນຸຍາດຈາກເຈົ້າຂອງຜູ້ມີສິດອັນຊອບທໍາ ໃນການນໍາໃຊ້ອົງປະກອບຕ່າງໆ ແລະ ຈະຮັບຜິດຊອບຄວາມອັນຕະລາຍ, ປົກປ້ອງ ແລະ ປ້ອງກັນ ທະນາຄານ ຫຼື ຜູ້ຮັບຜິດຊອບ ແລະ ບັນດາພະນັກງານ ຫຼື ລູກຈ້າງຈາກອົງປະກອບຕ່າງໆທີ່ຕົກແຕ່ງໂດຍລູກຄ້າ.